## ຄຳຖະແຫຼງການ ບໍ່ຈຳແນກປະຕິບັດຂອງ SNAP ແລະ FDPIR ສຳລັບແບບຟອມການສະໝັກຮ່ວມ

ຕາມກົດໝາຍສິດທິພົນລະເຮືອນຂອງລັດຖະບານກາງ ແລະ ກົດລະບຽບ ແລະ ນະໂຍບາຍຕໍ່ສິດທິພົນລະເຮືອນຂອງກະຊວງກະສິກຳຂອງສະຫະລັດ (USDA), USDA, ໜ່ວຍງານ, ສຳນັກງານ ແລະ ພະນັກງານຂອງຕົນ ແລະ ສະຖາບັນທີ່ເຂົ້າຮ່ວມ ຫຼື ກຳກັບໂຄງການ USDA ໄດ້ຖືກສັ່ງຫ້າມບໍ່ໃຫ້ຈຳແນກປະຕິບັດໂດຍອີງຕາມເຊື້ອຊາດ, ສີຜິວ, ຊາດກຳເນີດ, ເພດ (ເຊິ່ງລວມເຖິງລັກສະນະເພດ ແລະ ລົດສະນິຍົມທາງເພດ), ນິກາຍສາສະໜາ, ຄວາມພິການ, ອາຍຸ, ຄວາມເຊື່ອທາງການເມືອງ ຫຼື ການຕອບໂຕ້ກັບ ຫຼື ການແກ້ແຄ້ນຍ້ອນກິດຈະກຳສິດທິພົນລະເຮືອນກ່ອນໜ້າໃນໂຄງການ ຫຼື ກິດຈະກຳໃດໜຶ່ງທີ່ດຳເນີນການ ຫຼື ສະໜອງທຶນໂດຍ USDA.
ໂຄງການທີ່ໄດ້ຮັບການຊ່ວຍເຫຼືອທາງການເງິນຂອງລັດຖະບານກາງຈາກກະຊວງບໍລິການສຸຂະພາບ ແລະ ມະນຸດຂອງສະຫະລັດ (HHS), ເຊັ່ນ ໂຄງການຊ່ວຍເຫຼືອຊົ່ວຄາວສຳລັບຄອບຄົວທີ່ມີຄວາມຂັດສົນ (TANF) ແລະ ໂຄງການຕ່າງໆທີ່ HHS ດຳເນີນການໂດຍກົງແມ່ນຍັງຖືກສັ່ງຫ້າມບໍ່ໃຫ້ຈຳແນກປະຕິບັດພາຍໃຕ້ກົດໝາຍສິດທິພົນລະເຮືອນຂອງລັດຖະບານກາງ ແລະ ກົດລະບຽບຂອງ HHS.

ຄົນພິການທີ່ຕ້ອງການວິທີການສື່ສານທາງເລືອກສຳລັບຂໍ້ມູນໂຄງການ (ເຊັ່ນ ພາສາເບຣວ, ແບບພິມໃຫຍ່, ເທບສຽງ, ພາສາມືແບບອາເມຣິກາ) ຄວນຕິດຕາມໜ່ວຍງານ (ຂອງລັດ ຫຼື ທ້ອງຖິ່ນ) ທີ່ພວກເຂົາໄດ້ສະໝັກຂໍສິດທິປະໂຫຍດ. ບຸກຄົນທີ່ຫູໜວກ, ບໍ່ຄ່ອຍໄດ້ຍິນ ຫຼື ຄົນທີ່ພິການທາງການປາກເວົ້າອາດຕິດຕໍ່ USDA ຜ່ານບໍລິການຣີເລຂອງລັດຖະບານກາງທີ່ເບີ (800) 877-8339. ນອກຈາກນັ້ນ, ອາດມີຂໍ້ມູນໂຄງການໃຫ້ໃນພາສາອື່ນໆນອກຈາກພາສາອັງກິດ.

### ຄຳຮ້ອງທຸກສິດທິພົນລະເຮືອນທີ່ກ່ຽວຂ້ອງກັບໂຄງການ USDA

USDA ໃຫ້ການຊ່ວຍເຫຼືອທາງການເງິນຂອງລັດຖະບານສຳລັບໂຄງການຄວາມປອດໄພອາຫານ ແລະ ການຫຼຸດຄວາມອຶດຢາກຫຼາຍໂຄງການ ເຊັ່ນ ໂຄງການຊ່ວຍເຫຼືອໂພຊະນາການເສີມ (SNAP), ໂຄງການຈຳໜ່າຍອາຫານສຳລັບເຂດສະຫງວນອິນເດຍ (FDPIR) ແລະ ອື່ນໆ.
ເພື່ອຍື່ນຄຳຮ້ອງທຸກຕໍ່ການຈຳແນກປະຕິບັດຂອງໂຄງການ, ໃຫ້ຕື່ມຂໍ້ມູນໃສ່ແບບຟອມຄຳຮ້ອງທຸກຕໍ່ການຈຳແນກປະຕິບັດຂອງໂຄງການ, (AD-3027) ແມ່ນສາມາດພົບໄດ້ຢູ່ອອນລາຍທີ່: [https://www.fns.usda.gov/sites/default/files/resource-files/ad3027-laotian.pdf](https://www.fns.usda.gov/sites/default/files/resource-files/ad3027-laotian.pdf)
ແລະ ໃນສຳນັກງານໃດໜຶ່ງຂອງ USDA ຫຼືຂຽນໜັງສືໄປຫາ USDA ແລະລະບຸຂໍ້ມູນທັງໝົດທີ່ຮ້ອງຂໍໃນແບບຟອມໃສ່ໃນໜັງສື. ເພື່ອຮ້ອງຂໍສຳເນົາຂອງແບບຟອມຄຳຮ້ອງທຸກ, ກະລຸນາໂທຫາ

(866) 632-9992. ຍື່ນແບບຟອມ ຫຼື ໜັງສືທີ່ຕື່ມຂໍ້ມູນໃສ່ແລ້ວໄປຫາ USDA ໂດຍ:

1. **ໄປສະນີ:** ໜ່ວຍງານອາຫານ ແລະ ໂພຊະນາການ, USDA
   1320 Braddock Place, Room 334, Alexandria, VA 22314; ຫຼື
2. **ແຟັກ:** (833) 256-1665 or (202) 690-7442; ຫຼື
3. **ໂທລະສັບ:** (833) 620-1071; ຫຼື
4. **ອີເມວ:** [FNSCIVILRIGHTSCOMPLAINTS@usda.gov](mailto:FNSCIVILRIGHTSCOMPLAINTS@usda.gov).

ສຳລັບຂໍ້ມູນອື່ນໆທີ່ກ່ຽວຂ້ອງກັບບັນຫາ SNAP, ບຸກຄົນທີ່ຕ້ອງການຂໍ້ມູນຕິດຕໍ່ຫາເບີໂທສາຍດ່ວນຂອງ USDA SNAP ທີ່ (800) 221-5689, ເຊິ່ງຍັງມີເປັນພາສາແອັດສະປາຍໂຍນ ຫຼື ໂທຫາເບີໂທຂໍ້ມູນ/ສາຍດ່ວນປະຈຳລັດ (ຄລິກໃສ່ລິ້ງສຳລັບລາຍຊື່ເບີໂທສາຍດ່ວນຕາມລັດ); ພົບໄດ້ຢູ່ອອນລາຍທີ່: [https://www.fns.usda.gov/snap/state-directory](https://www.fns.usda.gov/snap/state-directory).

**ຄໍາຮ້ອງທຸກສິດທິພົນລະເຮືອນທີ່ກ່ຽວຂ້ອງກັບໂຄງການ HHS**

HHS ໃຫ້ການຊ່ວຍເຫຼືອທາງການເງິນຂອງລັດຖະບານສໍາລັບຫຼາຍໂຄງການເພື່ອສົ່ງເສີມສຸຂະພາບ ແລະ ສະຫວັດດີພາບ, ເຊິ່ງລວມເຖິ TANF, Head Start, ໂຄງການຊ່ວຍເຫຼືອພະລັງງານເຮືອນທີ່ມີລາຍໄດ້ຕໍ່າ (LIHEAP) ແລະ ອື່ນໆ. ຖ້າທ່ານເຊື່ອວ່າທ່ານຖືກຈໍາແນກປະຕິບັດຍ້ອນເຊື້ອຊາດ, ສີຜິວ, ຊາດກໍາເນີດ, ຄວາມພິການ, ອາຍຸ, ເພດ (ເຊິ່ງລວມເຖິງການຖືພາ, ລົດສະນິຍົມທາງເພດ ແລະ ລັກສະນະເພດ) ຫຼື ສາສະໜາໃນໂຄງການ ຫຼື ກິດຈະກໍາທີ່ HHS ດໍາເນີການໂດຍກົງ ຫຼື ທີ່ HHS ໃຫ້ການຊ່ວຍເຫຼືອທາງການເງິນຂອງລັດຖະບານກາງ, ທ່ານອາດຍື່ນຄໍາຮ້ອງທຸກກັບສໍານັກງານສິດທິພົນລະເຮືອນ (OCR) ສໍາລັບຕົວທ່ານເອງ ຫຼື ສໍາລັບຄົນອື່ນ.

ເພື່ອຍື່ນຄໍາຮ້ອງທຸກຕໍ່ການຈໍາແນກປະຕິບັດສໍາລັບຕົວທ່ານເອງ ຫຼື ຄົນອື່ນກ່ຽວກັບໂຄງການທີ່ໄດ້ຮັບການຊ່ວຍເຫຼືອທາງການເງິນຂອງລັດຖະບານຜ່ານພອດທໍຄໍາຮ້ອງທຸກຂອງ OCR ທີ່: https://ocrportal.hhs.gov/ocr/.  ທ່ານອາດຍັງ ຕິດຕໍ່ OCR ຜ່ານໄປສະນີທີ່: ໜ່ວຍປະຕິບັດການຄຸ້ມຄອງຄົນເຈັບລະບົບກາງ, ກະຊວງບໍລິການສຸຂະພາບ ແລະ ມະນຸດຂອງສະຫະລັດ, 200 Independence Avenue, S.W., Room 509F HHH Bldg., Washington, D.C. 20201; ແຟັກ: (202) 619-3818; ຫຼື ອີເມວ: OCRmail@hhs.gov. ສໍາລັບການປະມວນຜົນທີ່ໄວຂຶ້ນ, ພວກເຮົາສົ່ງເສີມໃຫ້ທ່ານໃຊ້ພອດທໍອອນລາຍຂອງ OCR ເພື່ອຍື່ນຄໍາຮ້ອງທຸກແທນທີ່ຈະຍື່ນຜ່ານໄປສະນີ. ບຸກຄົນທີ່ຕ້ອງການຄວາມຊ່ວຍເຫຼືອໃນການຍື່ນຄໍາຮ້ອງທຸກຕໍ່ສິດທິພົນລະເຮືອນສາມາດສົ່ງອີເມວຫາ OCR ທີ່: OCRMail@hhs.gov ຫຼື ໂທຟຣີ OCR ທີ່ 1-800-368-1019, TDD 1-800-537-7697.  ສໍາລັບບຸກຄົນທີ່ຫູໜວກ, ບໍ່ຄ່ອຍໄດ້ຍິນ ຫຼື ພົບກັບຄວາມຫຍຸ້ງຍາກໃນການປາກເວົ້າ, ກະລຸນາກົດ 7-1-1 ເພື່ອເຂົ້າເຖິງບໍລິການຣີເລໂທລະຄົມມະນາຄົມ. ພວກເຮົາຍັງໃຫ້ຮູບແບບທາງເລືອກ (ເຊັ່ນ: ພາສາເບຣວ ແລະ ແບບພິມໃຫຍ່), ການຊ່ວຍເຫຼືອເສີມ ແລະ ບໍລິການຊ່ວຍເຫຼືອດ້ານພາສາໂດຍບໍ່ເສຍຄ່າສໍາລັບການຍື່ນ ຄໍາຮ້ອງທຸກ.

ສະຖາບັນນີ້ຄືຜູ້ບໍລິການໂອກາດຢ່າງເທົ່າທຽມ.